ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------------000---------------

ກະຊວງສຶກສາທິການ ແລະ ກິລາ

ເລກທີ 0602/ສສກ.ກກ

ນະຄອນຫຼວງວຽງຈັນ, ວັນທີ 16 MAY 2014

**ຄຳແນະນຳ**

**ກ່ຽວກັບການກວດກາເອກະສານຢັ້ງຢືນການສຶກສາ, ປະກາສະນີຍະບັດ ແລະ ວຸດທິການສຶກສາໃນຂອບເຂດທົ່ວປະເທດ.**

ເຖິງ: - ບັນດາກະຊວງ, ອົງການທຽບເທົ່າ, ແຂວງ ແລະ ນະຄອນຫຼວງ;

- ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ພາກເອກະຊົນ;
- ສະຖານການສຶກສາທັງພາກລັດ ແລະ ພາກເອກະຊົນແຫ່ງຕ່າງໆ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ), ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011;

ໃນໄລຍະຜ່ານມາ ທົ່ວຂະແໜງການສຶກສາ ແລະ ກິລາ ກໍໄດ້ຕັ້ງໜ້າສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ໃນການປອມແປງເອກະສານຢັ້ງຢືນການຮຽນ, ປະກາສະນີຍະບັດ ແລະ ວຸດທິການສຶກສາດ້ວຍຄວາມຮັບຜິດຊອບສູງ, ແຕ່ສະພາບຫຍໍ້ທໍ້ດັ່ງກ່າວ ຍັງສືບຕໍ່ແຜ່ລາມໃນຂອບເຂດທົ່ວປະເທດ ແລະ ມີທ່າອ່ຽງເພີ່ມຂຶ້ນ, ຊຶ່ງເປັນການລະເມີດລະບຽບ, ກົດໝາຍ, ທັງເປັນຜົນກະທົບເຖິງຄຸນນະພາບຂອງການສຶກສາ, ການພັດທະນາຊັບພະຍາກອນມະນຸດ ແລະ ເສດຖະກິດຂອງຊາດ ໃນປັດຈຸບັນກໍຄືອານາຄົດ. ສະນັ້ນ, ເພື່ອເປັນການຮັບປະກັນການຄຸ້ມຄອງປະກາສະນີຍະບັດ, ເອກະສານຢັ້ງຢືນການສຶກສາ ແລະ ວຸດທິການສຶກສາໃຫ້ເຂົ້າສູ່ລະບຽບ ທັງເປັນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຢ່າງຮີບດ່ວນ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງອອກຄຳແນະນຳ ດັ່ງນີ້:

1. ໃຫ້ບັນດາອົງການຈັດຕັ້ງຂອງພັກ, ຂອງລັດ, ອົງການຈັດຕັ້ງມະຫາຊົນ, ສັງຄົມ ນັບທັງພາກລັດ ແລະ ພາກເອກະຊົນ ທີ່ຈະຮັບເອົາພະນັກງານໃໝ່ ເຂົ້າສັງກັດອົງການຂອງຕົນ ໃຫ້ເອົາໃຈໃສ່ກວດກາຢ່າງເຂັ້ມງວດຕໍ່ຄວາມຖືກຕ້ອງຂອງເອກະສານຢັ້ງຢືນການສຶກສາ ເຊັ່ນ: ປະກາສະນີຍະບັດຈົບຊັ້ນມັດທະຍົມສຶກສາ ແລະ ປະກາສະນີຍະບັດຈົບຊັ້ນວິຊາສະເພາະຕ່າງໆ ເພື່ອປ້ອງກັນບໍ່ໃຫ້ມີຄົນບໍ່ດີ ນຳໃຊ້ການປອມແປງເອກະສານຂ້າງເທິງ ເຂົ້າສັງກັດອົງການຂອງຕົນ.

2. ສະຖາບັນການສຶກສາທຸກຊັ້ນ, ທຸກສາຍ ນັບທັງພາກລັດ ແລະ ພາກເອກະຊົນ ທີ່ຈະຮັບນັກສຶກສາ ເຂົ້າຮຽນໃນສະຖາບັນການສຶກສາຂອງຕົນ ຕ້ອງກວດກາຢ່າງເຂັ້ມງວດ ຄວາມຖືກຕ້ອງຂອງເອກະສານ ຢັ້ງຢືນການສຶກສາທີ່ກ່າວໃນຂໍ້ 1 ຂ້າງເທິງ ເພື່ອຮັບປະກັນບໍ່ໃຫ້ມີນັກຮຽນ- ນັກສຶກສາ ນຳໃຊ້ເອກະສານ ປອມເຂົ້າມາຮຽນ ຢູ່ສະຖາບັນການສຶກສາຂອງຕົນ.
3. ນັບແຕ່ໄລຍະເລີ່ມດຳເນີນການປະຕິຮູບລະບົບການສຶກສາແຫ່ງຊາດມານີ້ ມີປະກົດການປອມແປງໃບຢັ້ງຢືນການສຶກສາ ແລະ ປະກາສະນີຍະບັດ ຊັ້ນຕ່າງໆຫຼາຍສົມຄວນ, ສະນັ້ນ ຈຶ່ງສະເໜີໃຫ້ບັນດາອົງການຈັດຕັ້ງຂອງພັກ, ຂອງລັດ, ອົງການຈັດຕັ້ງມະຫາຊົນ, ສັງຄົມ ນັບທັງພາກລັດ ແລະ ພາກເອກະຊົນ ກວດກາຄືນຍ້ອນຫຼັງ ພະນັກງານທີ່ເຂົ້າສັງກັດອົງການຂອງຕົນ ນັບແຕ່ປີ 2006 ເປັນຕົ້ນມາ, ຖ້າຫາກມີກໍລະນີລະແວງສົງໃສ ແມ່ນໃຫ້ພົວພັນກັບກົມກວດກາ, ກົມວິຊາການທີ່ກ່ຽວຂ້ອງ ຂອງກະຊວງສຶກສາທິການ ແລະ ກິລາ, ໂຮງຮຽນ ຫຼື ສະຖາ ບັນການສຶກສາຕົ້ນສັງກັດຂອງຜູ້ກ່ຽວ ຕາມຄວາມເໝາະສົມ.
4. ໃນກໍລະນີກວດພົບບຸກຄົນທີ່ໄດ້ປອມແປງເອກະສານຢັ້ງຢືນການສຶກສາ, ປະກາສະນີຍະບັດ ແລະ ວຸດທິການສຶກສາ ແມ່ນໃຫ້ແຈ້ງເປັນທາງການ (ເປັນລາຍລັກອັກສອນ) ມາຍັງກະຊວງສຶກສາທິການ ແລະ ກິລາ ເພື່ອຈະໄດ້ປະກາດລົບລ້າງເອກະສານດັ່ງກ່າວ ພ້ອມກັນນັ້ນ ກໍໃຫ້ດຳເນີນການປະຕິບັດວິໄນຕາມລະບຽບການ ແລະ ລົງໂທດຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.
5. ມອບໃຫ້ກົມວິຊາການຂອງກະຊວງສຶກສາທິການ ແລະ ກິລາ ແລະ ສະຖາບັນການສຶກສາທີ່ກ່ຽວຂ້ອງ ອອກຄຳແນະນຳລະອຽດຕື່ມ ແລ້ວແຈ້ງ ໃຫ້ສັງຄົມ ຮັບຊາບຢ່າງກວ້າງຂວາງ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.
6. ໃຫ້ທຸກຂະແໜງການ, ແຂວງ, ນະຄອນຫຼວງ, ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ພາກເອກະຊົນ ຂັ້ນສູນກາງ ແລະ ທ້ອງຖິ່ນ, ສະຖານການສຶກສາທັງພາກລັດ ແລະ ພາກເອກະຊົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ໃຫ້ໄດ້ຮັບໝາກຜົນ;
7. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ,

ດຣ.ພັນຄຳ ວິພາວັນ

➢ບ່ອນສົ່ງ:

- ຫ້ອງວ່າການລັດຖະບານ 1 ສະບັບ
- ບັນດາກະຊວງ, ອົງການທຽບເທົ່າກະຊວງ ບ່ອນລະ 1 ສະບັບ
- ແຂວງ, ນະຄອນຫລວງ ບ່ອນລະ 1 ສະບັບ
- ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ພາກເອກະຊົນ ບ່ອນລະ 1 ສະບັບ
- ສະຖາບັນການສຶກສາພາກລັດ ແລະ ເອກະຊົນ ບ່ອນລະ 1 ສະບັບ
- ຫ້ອງການກະຊວງ ສສກ, ບັນດາກົມ ພາກສ່ວນລະ 1 ສະບັບ
- ເກັບມ້ຽນ 5 ສະບັບ